ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ສະຖາບັນກິລາ-ກາຍຍະກຳ

ເລກທີ 053 /ສບກ

ນະຄອນຫຼວງວຽງຈັນ, ວັນທີ 03 ກຸມພາ 2025

# ໜັງສືແຈ້ງເຊີນປະມູນ

1. ສະຖາບັນກິລາ-ກາຍຍະກຳ ກະຊວງສຶກສາທິການ ແລະ ກິລາ ຂໍເຊີນບັນດາບໍລິສັດ/ຫ້າງຮ້ານ ທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະສົມ ເຂົ້າຍື່ນຊອງປະມູນ ສໍາລັບການສະໜອງ ການຈັດຊື້-ຈັດຈ້າງ ອຸປະກອນຮັບໃຊ້ຫ້ອງການ, ອຸປະກອນສື່ການຮຽນ-ການສອນ ແລະ ອຸປະກອນຮັບໃຊ້ວຽກງານວິຊາສະເພາະ ປະຈໍາປີ 2025 ຂອງສະຖາບັນກິລາ-ກາຍຍະກຳ ໄລຍະການຈັດສົ່ງສິນຄ້າ ແມ່ນພາຍໃນ 01 ເດືອນ ພາຍຫຼັງເຊັນສັນຍາ;
2. ການປະມູນຈະດໍາເນີນຕາມຂັ້ນຕອນ ການປະມູນເປີດກວ້າງພາຍໃນປະເທດ ທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ອະນຸຍາດໃຫ້ທຸກໆບໍລິສັດ/ຫ້າງຮ້ານ ທີ່ມີຄຸນນະວຸດທິເໝາະສົມ;
4. ບໍລິສັດ/ຫ້າງຮ້ານທີ່ມີຄຸນນະວຸດທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນ ແລະ ກວດເບິ່ງເອກະສານປະມູນໄດ້ທີ່ ພະແນກບໍລິຫານ ແລະ ຈັດຕັ້ງພະນັກງານ ສະຖາບັນກິລາ-ກາຍຍະກຳ ກະຊວງສຶກສາທິການ ແລະ ກິລາ ໂທລະສັບ 021 633 102 ຕາມວັນເວລາລັດຖະການ;
5. ເອກະສານປະມູນຄົບຊຸດທີ່ເປັນພາສາລາວສາມາດຊື້ໄດ້ໂດຍຜູ້ປະມູນທີ່ສົນໃຈໂດຍການຍື່ນໜັງສືສະເໜີຫາ ຫຼື ສາມາດສອບຖາມລາຍລະອຽດໄດ້ທີ່ ພະແນກບໍລິຫານ ແລະ ຈັດຕັ້ງພະນັກງານ ສະຖາບັນກິລາ-ກາຍຍະກຳ ກະຊວງສຶກສາທິການ ແລະ ກິລາ ຖະໜົນ 13 ເໜືອ ບ້ານສີເກີດ ເມືອງນາຊາຍທອງ ນະຄອນຫຼວງວຽງຈັນ ໂທລະສັບ 021 633 102, ເລີ່ມແຕ່ວັນທີ 03 ກຸມພາ 2025 ຕາມວັນເວລາລັດຖະການ ໃນລາຄາ 500.000 ກີບ, ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ວິທີການຊໍາລະຈະຕ້ອງເປັນເງິນສົດ;
6. ຊອງປະມູນຈະຕ້ອງສົ່ງທີ່ຫ້ອງປະຊຸມ ຊັ້ນ 01 ຂອງສະຖາບັນກິລາ-ກາຍຍະກຳ ເວລາ 14:00 ໂມງ ຂອງວັນທີ 27 ກຸມພາ 2025. ຊອງປະມູນທີ່ສົ່ງມາທາງເອເລັກໂຕຼນິກຈະບໍ່ອະນຸຍາດ ຊອງປະມູນທີ່ສົ່ງຊ້າກ່ອນເວລາທີ່ກໍານົດໄວ້ ຈະບໍ່ຮັບເອກະສານປະມູນ ແລະ ສົ່ງຄືນ ໂດຍບໍ່ມີການເປີດຊອງ, ຊອງທຸກໆຊອງຈະໄດ້ເປີດໃນເວລາ 14:00 ໂມງ ຂອງວັນທີ 27 ກຸມພາ 2025 ໂດຍຊ່ອງໜ້າຄະນະກໍາມະການການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນໍາ;
7. ທຸກໆຊອງປະມູນຕ້ອງໄດ້ປະກອບໜັງສືຄໍ້າປະກັນການປະມູນດ້ວຍກຽດ ຫຼື ໜັງສືຄໍ້າປະກັນການປະມູນຈາກທະນາຄານ ຊຶ່ງມູນຄ່າການຄໍ້າປະກັນບໍ່ໃຫ້ຫຼຸດ 2%(ສອງສ່ວນຮ້ອຍ) ຂອງລາຄາປະມູນ ມາພ້ອມ.

ຜູ້ອໍານວຍການ

ກະຊວງສຶກສາທິການ ... ສະຖາບັນກິລາ-ກາຍ...

ສຸລິວັນ ເຊີນວິໄລ

สแกนด้วย CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ
ສະຖາບັນກິລາ-ກາຍຍະກຳ

ເລກທີ 053 /ສບກ
ນະຄອນຫຼວງວຽງຈັນ, ວັນທີ 03 ກຸມພາ 2025

# ເງື່ອນໄຂຄັດເລືອກ ບໍລິສັດ ທີ່ເຂົ້າຮ່ວມການປະມູນ

ໂຄງການ: ຈັດຊື້-ຈັດຈ້າງ ອຸປະກອນຮັບໃຊ້ຫ້ອງການ, ອຸປະກອນສື່ການຮຽນ-ການສອນ ແລະ ອຸປະກອນຮັບໃຊ້ວຽກງານວິຊາສະເພາະ ປະຈຳປີ 2025 ຂອງສະຖາບັນກິລາ-ກາຍຍະກຳ.

- ອີງຕາມ ຂໍ້ຕົກລົງ ທ່ານລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງສະຖາບັນກິລາ-ກາຍຍະກຳ ສະບັບເລກທີ 1171/ສສກ, ລົງວັນທີ 23 ມີນາ 2020;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະການປະມູນ ຈັດຊື້-ຈັດຈ້າງ ອຸປະກອນຮັບໃຊ້ຫ້ອງການ, ອຸປະກອນສື່ການຮຽນ-ການສອນ ແລະ ອຸປະກອນຮັບໃຊ້ວຽກງານວິຊາສະເພາະ ປະຈຳປີ 2025 ສະຖາບັນກິລາກາຍຍະກຳ-ສະບັບເລກທີ 874/ສສກ, ລົງວັນທີ 03 ກຸມພາ 2025;
- ອີງຕາມ ແຜນຈັດສັນງົບປະມານ ປະຈຳປີ 2025 ຂອງສະຖາບັນກິລາ-ກາຍຍະກຳ ສະບັບເລກທີ 074/ສບກ, ລົງວັນທີ 03 ກຸມພາ 2025.

ເພື່ອເຮັດໃຫ້ການຈັດຊື້-ຈັດຈ້າງດັ່ງກ່າວ ຮັບປະກັນດ້ານຄຸນນະພາບ ກໍ່ຄືການໃຊ້ຈ່າຍງົບປະມານໃຫ້ມີປະສິດທິຜົນ. ສະນັ້ນ, ທາງຄະນະກຳມະການຮັບຜິດຊອບການປະມູນ ຈັດຊື້-ຈັດຈ້າງດັ່ງກ່າວ ຈຶ່ງກຳນົດເງື່ອນໄຂຕາມລະບຽບຫຼັກການ ດັ່ງລຸ່ມນີ້:

1. ບໍລິສັດທີ່ເຂົ້າຮ່ວມການປະມູນຕ້ອງມີໃບອະນຸຍາດດຳເນີນທຸລະກິດຊັ້ນ 01 ສົກປີ 2024 ຂຶ້ນໄປ;
2. ຕ້ອງເປັນບໍລິສັດທີ່ເສຍພັນທະຕໍ່ລັດເປັນປະຈຳບໍ່ຂາດ;
3. ຕ້ອງເປັນບໍລິສັດທີ່ມີປະຫວັດການເຮັດວຽກອັນຂາວສະອາດ, ບໍ່ມີຄະດີ;
4. ຕ້ອງມີອຸປະກອນເພື່ອສະໜອງ ເປັນຂອງຕົນເອງ;
5. ຕ້ອງມີສຳເນົາຢັ້ງຢືນດ້ານຖານະການເງິນຈາກທະນາຄານແຫ່ງ ສປປ ລາວ;
6. ຕ້ອງປະກອບເອກະສານປະມູນໃຫ້ຄົບຊຸດ;
   - ເອກະສານປະເມີນລາຄາ ສາມາດ ຂຽນ ຫຼື ພິມ (ເອກະສານ ຕິດຂັດ ພ້ອມ CD);
   - ແຜນດຳເນີນງານ ມີແບບຟອມ ຫຼື ສາມາດສ້າງຂຶ້ນດ້ວຍຕົນເອງ;
   - ເງິນຄ້ຳປະກັນການປະມູນ ບໍ່ໃຫ້ຫຼຸດ 2% ຂອງມູນຄ່າລວມ (ກຳນົດອາຍຸເງິນຄ້ຳປະກັນ 30 ວັນ) ເງິນຄ້ຳປະກັນສາມາດນຳໃຊ້ຮູບແບບ ຄ້ຳປະກັນດ້ວຍເງິນສົດ ຫຼື ແຊກເງິນສົດ ທີ່ຢັ້ງຢືນຈາກທະນາຄານ ແລະ ຮັບຮູ້ນຳໃຊ້ໄດ້;
   - ເຈົ້າຂອງໂຄງການສາມາດຂໍເອກະສານ ສະໜັບສະໜູນເພີ່ມເຕີມ ຫາກເຫັນວ່າມີຄວາມຈຳເປັນສຳລັບການປະເມີນ ແລະ ທຸກໆ ການປອມແປງທາງດ້ານເອກະສານ ເພື່ອຈຸດປະສົງຜ່ານຄຸນວຸດທີແມ່ນ ບໍ່ຮັບພິຈາລະນາເອກະສານຕໍ່ເດັດຂາດ;



สแกนด้วย CamScanner

7. ເຈົ້າຂອງໂຄງການສະຫງວນສິດໂຈະ ຫຼື ຍົກເລີກການປະມູນ;
8. ເຈົ້າຂອງໂຄງການມີສິດເລືອກເອົາ ບໍລິສັດໃດໜຶ່ງທີ່ມີລາຄາອັນສົມເຫດສົມຜົນ ແລະ ຖານະດ້ານການເງິນເປັນບ່ອນອີງຕາມດຳລັດ ໂດຍຈະຄັດເລືອກເອົາທີ 1 ຫາທີ 3 ມາພິຈາລະນາ ແລະ ບໍ່ຈຳເປັນຈະແຈ້ງຄືນໃຫ້ບໍລິສັດທີ່ບໍ່ຊະນະການປະມູນຮັບຊາບວ່າ ບໍລິສັດຂອງທ່ານມີຈຸດອ່ອນອັນໃດໜຶ່ງ;
9. ເງື່ອນໄຂດັ່ງກ່າວມາຂ້າງເທິງນີ້ແມ່ນອີງໃສ່ ເພື່ອຮັບປະກັນທາງດ້ານວຽກງານໃຫ້ສຳເລັດຕາມຄາດໝາຍ ແລະ  ທ່ວງທັນກັບເວລາ, ເພື່ອຫຼີກລ້ຽງອັດຕາລາຄາວັດສະດຸເໜັງຕີງ ແລະ ຫຼີກລ້ຽງບໍລິສັດໃດໜຶ່ງທີ່ບໍ່ມີທຶນຮອນພຽງພໍ;
10. ບໍລິສັດໃດຫາກບໍ່ຊະນະໃນເງື່ອນໄຂການປະມູນ ຫຼື ຂາດເງື່ອນໄຂໃດໜຶ່ງຄະນະກຳມະການຈະສົ່ງເອກະສານພ້ອມທັງເງິນຄ້ຳປະກັນຊອງປະມູນ ຂອງທ່ານຄືນທັນທີ ໂດຍບໍ່ຮັບພິຈາລະນາແຕ່ຢ່າງໃດ.
11. ບໍລິສັດໃດຫາກຖືກຮັບຮອງເອົາຈະສົ່ງເງິນຄ້ຳປະກັນຄືນ ພາຍຫຼັງໄດ້ເຊັນສັນຍາຈັດຊື້-ຈັດຈ້າງສຳເລັດ.

ດັ່ງນັ້ນ, ຈຶ່ງໄດ້ອອກລະບຽບການຄັດເລືອກສະບັບນີ້ໄວ້ ເພື່ອເປັນບ່ອນອີງໃຫ້ແກ່ການຕັດສິນ ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຜູ້ອຳນວຍການ

ສຸລິວັນ ເຊີນວິໄລ



สแกนด้วย CamScanner